ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 120 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້
## ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ
## ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 126/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 20/ຄປຈ, ລົງວັນທີ 29 ກໍລະກົດ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 126 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 24 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 28 ມິຖຸນາ 2024.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 58 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍການເລືອກຕັ້ງ
# ສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ
# (ສະບັບປັບປຸງ)

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ການປະຕິບັດສິດປະຊາທິປະໄຕ ໃນການເລືອກຕັ້ງ ຂອງພົນລະເມືອງລາວ ດຳເນີນໄປຕາມກົດໝາຍ ແລະ ຮັບປະກັນການເລືອກຕັ້ງ ໃຫ້ໄດ້ສະມາຊິກສະພາ ຜູ້ມີ ມາດຕະຖານຄົບຖ້ວນ ແນໃສ່ປັບປຸງບຸລະນະສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ໜັກແໜ້ນ, ເຂັ້ມແຂງ, ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຢ່າງແທ້ຈິງ.

**ມາດຕາ 2 (ປັບປຸງ) ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ**

ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນ ຂະບວນການປະຕິບັດ ໜ້າທີ່ການເມືອງ ແລະ ສິດປະຊາທິປະໄຕ ຂອງພົນລະເມືອງລາວ ໃນການເລືອກເອົາບຸກຄົນທີ່ມີມາດຕະຖານ ຄົບຖ້ວນ ເຂົ້າໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອເປັນຕົວແທນແຫ່ງສິດອຳນາດຂອງ ປະຊາຊົນລາວບັນດາເຜົ່າ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພົນລະເມືອງລາວ** ໝາຍເຖິງ ຜູ້ມີສັນຊາດລາວ ຊຶ່ງມີສາຍກ່ຽວພັນສະໜິດແໜ້ນທາງດ້ານການ ເມືອງ ແລະ ກົດໝາຍ ລະຫວ່າງ ບຸກຄົນ ກັບ ລັດ ແຫ່ງ ສປປ ລາວ;

2. **ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ** ໝາຍເຖິງ ຜູ້ຖືກສານຕັດສິນເປັນຜູ້ກະທຳຜິດ ແລະ ພວມປະຕິບັດໂທດຢູ່;

3. **ບັດທີ່ບໍ່ສາມາດເຊື່ອຖືໄດ້** ໝາຍເຖິງ ບັດທີ່ບໍ່ສາມາດຢັ້ງຢືນໄດ້ຢ່າງຊັດເຈນ ເປັນຕົ້ນ ບັດເປື້ອນ, ບັດຈີກຂາດ, ບັດເກີນຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງ ຢູ່ໜ່ວຍປ່ອນບັດເລືອກຕັ້ງນັ້ນ;

4. **ສະມາຊິກສະພາ** ໝາຍເຖິງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

5. **ສະພາ** ໝາຍເຖິງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

6. **ສະພາປະຊາຊົນຂັ້ນແຂວງ** ໝາຍເຖິງ ສະພາປະຊາຊົນ ນະຄອນຫຼວງ, ແຂວງ;

7. **ເຂດເລືອກຕັ້ງ** ໝາຍເຖິງ ເຂດທີ່ຜູ້ສະໝັກຮັບເລືອກຕັ້ງ ລົງໄປສະໝັກເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານເລືອກຕັ້ງ**

ລັດ ຊຸກຍູ້, ປຸກລະດົມ ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນ ໃຫ້ມີຄວາມຕື່ນຕົວ, ເປັນເຈົ້າການເຂົ້າຮ່ວມ ແລະ ນຳໃຊ້ສິດປະຊາທິປະໄຕຂອງຕົນເຂົ້າໃນວຽກງານເລືອກຕັ້ງ ໃຫ້ໄດ້ຢ່າງເຕັມສ່ວນ.

ລັດ ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນທີ່ຈຳເປັນ ແລະ ປະກອບບຸກຄະລາກອນ ເພື່ອສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ວຽກງານເລືອກຕັ້ງ ໃຫ້ໄດ້ຕາມລະດັບຄາດໝາຍ ແລະ ມີປະສິດທິຜົນ ທັງຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພ.

**ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານເລືອກຕັ້ງ**

ວຽກງານເລືອກຕັ້ງສະມາຊິກສະພາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຫຼັກການທົ່ວໄປ ຊຶ່ງແມ່ນ ລະບຽບການທີ່ກຳນົດໃຫ້ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງ ດຳເນີນການປ່ອນບັດໃນ ວັນ, ເວລາ ດຽວກັນ ລວມທັງວິທີການປ່ອນບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ສະເພາະ;

2. ຫຼັກການສະເໝີພາບ ຊຶ່ງແມ່ນ ພົນລະເມືອງລາວ ມີສິດເທົ່າທຽມກັນໃນການເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ໂດຍບໍ່ຈຳແນກ ເພດ, ເຜົ່າ, ຖານະທາງດ້ານເສດຖະກິດ, ສັງຄົມ, ລະດັບການສຶກສາ ແລະ ຄວາມເຊື່ອຖື;

3. ຫຼັກການໂດຍກົງ ຊຶ່ງແມ່ນ ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງ ດຳເນີນການປ່ອນບັດດ້ວຍຕົນເອງ ເພື່ອເລືອກເອົາຜູ້ສະໝັກຮັບເລືອກຕັ້ງ ທີ່ຕົນເຫັນວ່າ ມີມາດຕະຖານຄົບຖ້ວນ ເປັນສະມາຊິກສະພາ;

4. ຫຼັກການລົງຄະແນນສຽງປິດລັບ ຊຶ່ງແມ່ນ ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງລົງຄະແນນສຽງ ດ້ວຍການຕັດສິນໃຈຂອງຕົນເອງ ຢູ່ຫ້ອງລັບທີ່ຄະນະກຳມະການຈັດໄວ້;

5. ຫຼັກການຍຸຕິທຳ ຊຶ່ງແມ່ນ ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ ໂດຍບໍ່ໃຫ້ມີການ ລັກໂລບ, ປອມແປງຄະແນນສຽງ, ສ້າງເງື່ອນໄຂ ທີ່ເອື້ອອຳນວຍຢ່າງເທົ່າທຽມກັນ ແລະ ຮັບປະກັນຄວາມໂປ່ງໃສ.

**ມາດຕາ 6 (ປັບປຸງ) ສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ**

ພົນລະເມືອງລາວ ໂດຍບໍ່ຈຳແນກ ເພດ, ເຜົ່າ, ຖານະທາງດ້ານເສດຖະກິດ, ສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື, ສາສະໜາ, ທີ່ຕັ້ງພູມລຳເນົາ ລ້ວນແຕ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ແລະ ມາດຕາ 8 ຂອງກົດໝາຍສະບັບນີ້.

**ມາດຕາ 7 (ໃໝ່) ຜູ້ມີສິດເລືອກຕັ້ງ**

ຜູ້ມີສິດເລືອກຕັ້ງ ສະມາຊິກສະພາ ແມ່ນ ພົນລະເມືອງລາວທີ່ມີອາຍຸ ສິບແປດປີ ຂຶ້ນໄປ.

ສຳລັບພົນລະເມືອງທີ່ໄດ້ຮັບສັນຊາດລາວ ຕາມກົດໝາຍວ່າດ້ວຍສັນຊາດລາວນັ້ນ ຕ້ອງໃຫ້ມີສຳມະໂນຄົວ ຫຼື ບັດປະຈຳຕົວ.

**ມາດຕາ 8 (ໃໝ່) ຜູ້ສະໝັກຮັບເລືອກຕັ້ງ**

ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ແມ່ນ ພົນລະເມືອງລາວໂດຍກຳເນີດ ທີ່ມີອາຍຸ ຊາວເອັດປີ ຂຶ້ນໄປ ແລະ ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 9 ຜູ້ບໍ່ມີສິດ ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ**

ພົນລະເມືອງລາວ ທີ່ບໍ່ມີສິດ ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ມີ ດັ່ງນີ້:

1. ຜູ້ ເປັນບ້າ, ເສຍຈິດ;
2. ຜູ້ຖືກສານຕັດສິນ ລົງໂທດຕັດອິດສະລະພາບ, ປົດສິດ ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ;
3. ບຸກຄົນອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ ທີ່ດຳລົງຊີວິດ ຢູ່ ສປປ ລາວ ແລະ ເຄື່ອນໄຫວປະຕິບັດໜ້າທີ່ຢູ່ຕ່າງປະເທດ.

## ໝວດທີ 2
## ການກຳນົດຈຳນວນສະມາຊິກສະພາ ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ

**ມາດຕາ 11 (ປັບປຸງ) ການກຳນົດຈຳນວນສະມາຊິກສະພາ**

ການກຳນົດຈຳນວນສະມາຊິກສະພາ ໃຫ້ປະຕິບັດ ດັ່ງນີ້:

1. ຮັບປະກັນການເຮັດວຽກເປັນໝູ່ຄະນະ;
2. ອີງໃສ່ທີ່ຕັ້ງ, ຄວາມສຳຄັນ, ຄວາມຈຳເປັນ, ຈຸດພິເສດທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ-ສັງຄົມ ຂອງນະຄອນຫຼວງ, ແຂວງ, ເມືອງ, ນະຄອນ;
3. ຮັບປະກັນ ໃຫ້ຈຳນວນສະມາຊິກສະພາ ຕ້ອງມີ ເພດ, ເຜົ່າ, ໄວອາຍຸ, ຜູ້ເກົ່າ ແລະ ຜູ້ໃໝ່, ຈາກຫຼາຍສາຂາອາຊີບ ທັງພາກລັດ ແລະ ເອກະຊົນ, ຕົວແທນຂອງບັນດາຊັ້ນຄົນ.

ສະມາຊິກສະພາແຫ່ງຊາດ ໃນແຕ່ລະຊຸດ ບໍ່ໃຫ້ເກີນ ໜຶ່ງຮ້ອຍເຈັດສິບຫ້າຄົນ, ເຂດເລືອກຕັ້ງໜ້ອຍສຸດ ບໍ່ໃຫ້ຫຼຸດ ຫ້າຄົນ, ຫຼາຍສຸດບໍ່ໃຫ້ເກີນ ຊາວຫ້າຄົນ ແລະ ມີຜູ້ປະຈຳຢູ່ເຂດເລືອກຕັ້ງ ບໍ່ໃຫ້ຫຼຸດ ສາມຄົນ.

ສະມາຊິກສະພາປະຊາຊົນ ນະຄອນຫຼວງ, ແຂວງ ກຳນົດຈຳນວນລວມທົ່ວ ນະຄອນຫຼວງ, ແຂວງ ໜ້ອຍສຸດ ບໍ່ໃຫ້ຫຼຸດ ຊາວຫ້າຄົນ, ຫຼາຍສຸດບໍ່ໃຫ້ເກີນ ເຈັດສິບຫ້າຄົນ ແລະ ມີຜູ້ປະຈຳຢູ່ເຂດເລືອກຕັ້ງ ຂັ້ນເມືອງ ບໍ່ໃຫ້ຫຼຸດ ສາມຄົນ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດຈຳນວນ ຜູ້ສະໝັກຮັບເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແຕ່ລະເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍແມ່ນ ປະທານປະເທດ ເປັນຜູ້ອອກລັດຖະດຳລັດ ປະກາດເປັນທາງການ ຢ່າງຊ້າ ສີ່ສິບຫ້າວັນ ກ່ອນວັນເລືອກຕັ້ງ.

**ມາດຕາ 12 (ປັບປຸງ) ມາດຕະຖານຂອງຜູ້ສະໝັກຮັບເລືອກຕັ້ງ**

ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ຕ້ອງມີມາດຕະຖານຄົບຖ້ວນ ດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກຳເນີດ;

2. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຈົງຮັກພັກດີ ແລະ ບໍລິສຸດ ຕໍ່ປະເທດຊາດ, ຖືເອົາຜົນປະໂຫຍດຂອງປະຊາຊົນເປັນກົກ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ, ມີຄວາມອົດທົນ, ປະຢັດ, ສັດຊື່, ທ່ຽງທຳ, ບໍ່ອວດອີ່ງທະນົງຕົວ, ບໍ່ສວຍໃຊ້ອຳນາດ ເດັດດ່ຽວຕ້ານການສໍ້ລາດບັງຫຼວງ, ຕ້ານພະຍາດອາດຍາສິດ ແລະ ເປັນແບບຢ່າງທີ່ດີ ໃນການປະຕິບັດກົດໝາຍ;

3. ກຳແໜ້ນ ແລະ ຍຶດໝັ້ນ ແນວທາງ ນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ; ຮູ້ໂຄສະນາ ແລະ ສຶກສາອົບຮົມປະຊາຊົນ, ເດັດດ່ຽວສູ້ຊົນ ເພື່ອບັນລຸເປົ້າໝາຍ ປະເທດຊາດ ມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ ປະຊາທິປະໄຕ ຍຸຕິທຳ ແລະ ສີວິໄລ;

4. ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ, ຄົ້ນຄວ້າມີຄຳເຫັນຕໍ່ບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ ແລະ ສາມາດປະຕິບັດໜ້າທີ່ຂອງຕົນໄດ້;

5. ມີລະດັບການສຶກສາຈົບຊັ້ນມັດທະຍົມຕອນຕົ້ນຂຶ້ນໄປ, ມີວິຊາສະເພາະໃດໜຶ່ງ ແລະ ຮູ້ນຳໃຊ້ເຕັກໂນໂລຊີ ແລະ ຂໍ້ມູນ ຂ່າວສານ ຂັ້ນພື້ນຖານ;

6. ມີສຸຂະພາບດີ.

**ມາດຕາ 13 (ປັບປຸງ) ການສະເໜີລາຍຊື່ ຜູ້ສະໝັກຮັບເລືອກຕັ້ງ**

ອົງການຈັດຕັ້ງຂອງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ມີສິດ ຄົ້ນຄວ້າ, ທາບທາມ ແລະ ສະເໜີລາຍຊື່ຜູ້ຕາງໜ້າອົງການຂອງຕົນອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ຈາກຂະແໜງການ ແລະ ອົງການຈັດຕັ້ງຂັ້ນສູນກາງນັ້ນ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ຈາກທ້ອງຖິ່ນໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳຢູ່ຂັ້ນເມືອງ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນເມືອງ ແລະ ນຳສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຈາກຂະແໜງການ ແລະ ອົງການຈັດຕັ້ງຂັ້ນແຂວງ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

**ມາດຕາ 14 (ປັບປຸງ) ການປະກອບເອກະສານຂອງຜູ້ສະໝັກຮັບເລືອກຕັ້ງ**

ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍສະໝັກຮັບເລືອກຕັ້ງ;
2. ຊີວະປະຫວັດ;
3. ຮູບຂະໜາດ 6x9 ຊັງຕີແມັດ, ພື້ນສີຟ້າ;
4. ໃບຢັ້ງຢືນທີ່ຢູ່;
5. ໃບຢັ້ງຢືນການສຶກສາ;
6. ໃບແຈ້ງໂທດເລກທີ 3;
7. ໃບຢັ້ງຢືນສຸຂະພາບ.

**ມາດຕາ 15 (ໃໝ່) ການຈັດລຽງເລກລຳດັບ ຂອງຜູ້ສະໝັກຮັບເລືອກຕັ້ງ**

ການຈັດລຽງເລກລຳດັບ ຂອງຜູ້ສະໝັກຮັບເລືອກຕັ້ງ ໃນແຕ່ລະເຂດເລືອກຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ແມ່ນ ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ຕົກລົງ;
2. ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ແມ່ນ ຄະນະກຳມະການເລືອກຕັ້ງຂັ້ນແຂວງ ເປັນຜູ້ຕົກລົງ.

**ມາດຕາ 16 ການປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ**

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ສັງລວມບັນຊີລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ໃນທົ່ວປະເທດ ແລ້ວປະກາດເປັນທາງການ ພາຍໃນເວລາ ສີ່ສິບຫ້າວັນ ກ່ອນວັນເລືອກຕັ້ງ.

**ມາດຕາ 17 (ປັບປຸງ) ການຄັດຄ້ານຜູ້ສະໝັກຮັບເລືອກຕັ້ງ**

ຜູ້ມີສິດປ່ອນບັດເລືອກຕັ້ງ ມີສິດຄັດຄ້ານຜູ້ສະໝັກຮັບເລືອກຕັ້ງ ໃນເຂດເລືອກຕັ້ງຂອງຕົນ ທີ່ຕົນເຫັນວ່າ ບໍ່ມີມາດຕະຖານຄົບຖ້ວນ ຫຼື ມີການກະທຳ ຊຶ່ງເປັນການລະເມີດກົດໝາຍ, ລະບຽບການ ແລະ ແຕະຕ້ອງ ເຖິງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ໂດຍມີ ຂໍ້ມູນ ຫຼັກຖານ ທີ່ເຊື່ອຖືໄດ້ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ເຈັດວັນ ນັບແຕ່ວັນປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນຕົ້ນໄປ.

ການຄັດຄ້ານນັ້ນ ໃຫ້ເຮັດເປັນລາຍລັກອັກສອນ ແລ້ວຍື່ນຕໍ່ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເພື່ອລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ພິຈາລະນາແກ້ໄຂ ພາຍໃນເວລາ ສາມວັນ. ໃນກໍລະນີ ບໍ່ສາມາດ

ແກ້ໄຂໄດ້ນັ້ນ ຕ້ອງຮີບຮ້ອນສົ່ງໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ພິຈາລະນາແກ້ໄຂ ພາຍໃນເວລາ ຫ້າວັນ ນັບແຕ່ວັນໄດ້ຮັບຄຳຄັດຄ້ານ ເປັນຕົ້ນໄປ.

ຜູ້ຄັດຄ້ານ ຕ້ອງຮັບຜິດຊອບຕໍ່ຄຳຄັດຄ້ານຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 (ປັບປຸງ) ການຈັດຕັ້ງໂຄສະນາຫາສຽງ**

ອົງການຈັດຕັ້ງຂອງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ມີ ສິດ ແລະ ໜ້າທີ່ອຳນວຍຄວາມສະດວກໃນການຈັດສະຖານທີ່, ຈັດຕັ້ງການໂຄສະນາຫາສຽງ ໃຫ້ຜູ້ສະໝັກຮັບເລືອກຕັ້ງໃນເຂດເລືອກຕັ້ງຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສະຖານທີ່ການໂຄສະນາຫາສຽງ ຕາມການຈັດຕັ້ງກຳນົດ ຕ້ອງມີປ້າຍຄຳຂວັນ, ຮູບ-ປະຫວັດຜູ້ສະໝັກຮັບເລືອກຕັ້ງ.

ຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນ ມີສິດໂຄສະນາຫາສຽງໃຫ້ແກ່ຕົນເອງ ຕາມລະບຽບການ ແລະ ບໍ່ໃຫ້ໂຄສະນາທັບຖົມ ຫຼື ໃສ່ຮ້າຍປ້າຍສີ ຜູ້ສະໝັກຮັບເລືອກຕັ້ງຄົນອື່ນ.

ການໂຄສະນາຫາສຽງ ໃຫ້ເລີ່ມພາຍຫຼັງວັນປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ຕາມການຕົກລົງຂອງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຕ້ອງຢຸດ ກ່ອນວັນເລືອກຕັ້ງ ໜຶ່ງວັນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ກຳນົດລະບຽບການຈັດຕັ້ງໂຄສະນາຫາສຽງ.

## ໝວດທີ 3
## ການກຳນົດເຂດເລືອກຕັ້ງ ແລະ ໜ່ວຍປ່ອນບັດເລືອກຕັ້ງ

**ມາດຕາ 19 (ປັບປຸງ) ການກຳນົດເຂດເລືອກຕັ້ງ**

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃຫ້ຖືເອົາ ນະຄອນຫຼວງ, ແຂວງ ເປັນເຂດເລືອກຕັ້ງ.

ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ຖືເອົາ ເມືອງ, ນະຄອນ ເປັນເຂດເລືອກຕັ້ງ.

ເພື່ອໃຫ້ແທດເໝາະກັບສະພາບການຕົວຈິງ ຮັບປະກັນການປະຕິບັດໜ້າທີ່ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ ຢ່າງເປັນປົກກະຕິ ພາຍຫຼັງການເລືອກຕັ້ງສຳເລັດແລ້ວ:

1. ຖ້າຫາກມີການຍຸບ ໂຮມເຂົ້າ ຫຼື ສ້າງຕັ້ງແຂວງຂຶ້ນໃໝ່ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງກ່ຽວກັບການສັບຊ້ອນສະມາຊິກສະພາແຫ່ງຊາດ;

2. ຖ້າຫາກມີການຍຸບ ໂຮມເຂົ້າ ຫຼື ສ້າງ ເມືອງ, ນະຄອນ ຂຶ້ນໃໝ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕົກລົງ ກ່ຽວກັບການສັບຊ້ອນສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 20 (ປັບປຸງ) ການກຳນົດໜ່ວຍປ່ອນບັດເລືອກຕັ້ງ**

ການກຳນົດໜ່ວຍປ່ອນບັດເລືອກຕັ້ງ ໃຫ້ຖືເອົາບ້ານເປັນຫຼັກ, ບ້ານໃດທີ່ມີຜູ້ມີສິດເລືອກຕັ້ງແຕ່ ຫ້າຮ້ອຍເຖິງ ໜຶ່ງພັນຄົນ ໃຫ້ຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ, ຖ້າຫາກຫຼາຍກວ່າ ໜຶ່ງພັນຄົນ ຂຶ້ນໄປ ໃຫ້ຈັດຕັ້ງເປັນຫຼາຍໜ່ວຍປ່ອນບັດເລືອກຕັ້ງ.

ສຳລັບບ້ານທີ່ມີຈຳນວນຜູ້ມີສິດເລືອກຕັ້ງໜ້ອຍກວ່າ ຫ້າຮ້ອຍຄົນ ແລະ ບ້ານຢູ່ໃກ້ຄຽງກັນນັ້ນ ມອບໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເປັນຜູ້ພິຈາລະນາ ວ່າຈະໂຮມເຂົ້າກັນ ຫຼື ຈະສ້າງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງຕ່າງຫາກ ໂດຍໃຫ້ອີງໃສ່ຈຸດພິເສດພູມສັນຖານ ຂອງແຕ່ລະທ້ອງຖິ່ນ.

ໃນກໍລະນີບ້ານທີ່ຢູ່ຫ່າງໄກສອກຫຼີກ, ການໄປມາມີຄວາມຫຍຸ້ງຍາກນັ້ນ ອາດຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ ຫຼື ຈັດຕັ້ງເປັນໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ ເພື່ອໄປຮັບເອົາບັດລົງຄະແນນສຽງຂອງຜູ້ມີສິດເລືອກຕັ້ງກໍໄດ້.

ໜ່ວຍປ່ອນບັດເລືອກຕັ້ງ ສໍາລັບພົນລະເມືອງລາວທີ່ພວມປະຕິບັດໜ້າທີ່ ແລະ ດໍາລົງຊີວິດຢູ່ຕ່າງປະເທດນັ້ນ ໃຫ້ຄະນະກໍາມະການເລືອກຕັ້ງລະດັບຊາດ ເປັນຜູ້ກໍານົດ.

**ມາດຕາ 21 (ປັບປຸງ) ການກໍານົດໜ່ວຍປ່ອນບັດເລືອກຕັ້ງຢູ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ບັນດາອົງການ, ກົມກອງ ຂອງກໍາລັງຫຼວງ ແລະ ກໍາລັງທ້ອງຖິ່ນ ເປັນຜູ້ກໍານົດໜ່ວຍປ່ອນບັດເລືອກຕັ້ງຢູ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງຕົນ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກໍາມະການເລືອກຕັ້ງຂັ້ນເມືອງ ທີ່ອົງການ, ກົມກອງນັ້ນຕັ້ງຢູ່ ເພື່ອຮັບຮູ້ ແລະ ສັງລວມເຂົ້າບັນຊີລາຍຊື່ ໃນຈໍານວນໜ່ວຍປ່ອນບັດເລືອກຕັ້ງຂອງ ເມືອງ, ນະຄອນ ນັ້ນ.

ສໍາລັບກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຖ້າຫາກມີຄວາມຈໍາເປັນຈັດຕັ້ງໜ່ວຍປ່ອນບັດເລືອກຕັ້ງສະເພາະນັ້ນ ກໍໃຫ້ຫ້ອງວ່າການກະຊວງດັ່ງກ່າວ ເປັນຜູ້ກໍານົດ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກໍາມະການເລືອກຕັ້ງຂັ້ນເມືອງ ບ່ອນກະຊວງນັ້ນຕັ້ງຢູ່ ເພື່ອຮັບຮູ້.

## ໝວດທີ 4
## ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ

**ມາດຕາ 22 (ປັບປຸງ) ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ**

ຫ້ອງການບ້ານ ເປັນຜູ້ຮັບຜິດຊອບຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ໃນຂອບເຂດບ້ານຂອງຕົນ.

ຜູ້ມີສິດເລືອກຕັ້ງແຕ່ລະຄົນ ມີສິດຈົດຊື່ຂອງຕົນ ຢູ່ໜ່ວຍປ່ອນບັດເລືອກຕັ້ງໜ່ວຍດຽວ ບ່ອນຕົນອາໄສຢູ່ ຫຼື ຂຶ້ນສໍາມະໂນຄົວເທົ່ານັ້ນ.

ຄະນະກໍາມະການເລືອກຕັ້ງລະດັບຊາດ ເປັນຜູ້ປະກາດຈໍານວນຜູ້ມີສິດເລືອກຕັ້ງດັ່ງກ່າວ ໃນຂອບເຂດທົ່ວປະເທດ ກ່ອນວັນເລືອກຕັ້ງ ພາຍໃນເວລາ ສາມສິບວັນ.

ບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ຕ້ອງນໍາມາຕິດປະກາດເປັນທາງການ ຢູ່ພາຍໃນໜ່ວຍປ່ອນບັດເລືອກຕັ້ງ, ຫ້ອງການບ້ານ ແລະ ສະຖານທີ່ສາທາລະນະຂອງເຂດປ່ອນບັດ ເພື່ອໃຫ້ປະຊາຊົນຕິດຕາມ ແລະ ກວດກາຊື່ຂອງຕົນ.

**ມາດຕາ 23 (ປັບປຸງ) ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຢູ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ບັນດາອົງການ, ກົມກອງ ຂອງກໍາລັງຫຼວງ ແລະ ກໍາລັງທ້ອງຖິ່ນ ເປັນຜູ້ຮັບຜິດຊອບຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກໍາມະການເລືອກຕັ້ງຂັ້ນເມືອງ ບ່ອນອົງການ, ກົມກອງ ດັ່ງກ່າວນັ້ນຕັ້ງຢູ່ ເພື່ອຮັບຮູ້.

ສໍາລັບ ທະຫານ, ຕໍາຫຼວດ ທີ່ມີປຶ້ມສໍາມະໂນຄົວ ອາໄສຢູ່ບ້ານໃດ ກໍໃຫ້ຈົດຊື່ຂອງຕົນເຂົ້າໃນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງ ຢູ່ໜ່ວຍປ່ອນບັດເລືອກຕັ້ງຂອງບ້ານນັ້ນ.

**ມາດຕາ 24 ການຂໍປ່ຽນໜ່ວຍປ່ອນບັດເລືອກຕັ້ງຢູ່ບ່ອນໃໝ່**

ພາຍຫຼັງໄດ້ປະກາດບັນຊີລາຍຊື່ຜູ້ມີສິດເລືອກຕັ້ງແລ້ວ ຖ້າຜູ້ໃດຜູ້ໜຶ່ງ ຫາກຖືກຍົກຍ້າຍ ຫຼື ໄປເຮັດວຽກງານຢູ່ບ່ອນອື່ນນັ້ນ ຕ້ອງແຈ້ງໃຫ້ ຫ້ອງການບ້ານ ຫຼື ຄະນະອົງການ, ກົມກອງຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ບ່ອນຕົນໄດ້ຂຶ້ນບັນຊີ ເພື່ອຂໍເອົາໃບຢັ້ງຢືນໄປລົງຄະແນນສຽງຢູ່ໜ່ວຍປ່ອນບັດເລືອກຕັ້ງບ່ອນໃໝ່.

## ໝວດທີ 5
## ຄະນະກຳມະການເລືອກຕັ້ງ

**ມາດຕາ 25 (ປັບປຸງ) ໂຄງປະກອບຄະນະກຳມະການເລືອກຕັ້ງ**

ຄະນະກຳມະການເລືອກຕັ້ງ ປະກອບດ້ວຍ:

1. ຄະນະກຳມະການເລືອກຕັ້ງລະດັບຊາດ;

2. ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ຊຶ່ງມີ ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຄະນະກຳມະການເລືອກຕັ້ງຂັ້ນເມືອງ;

3. ການປະກອບຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ໃຫ້ມີຕົວແທນຈາກອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ມີສິດສ້າງຕັ້ງອະນຸກຳມະການ ເພື່ອເປັນກົງຈັກຊ່ວຍວຽກຂອງຕົນຕາມຄວາມເໝາະສົມ.

**ມາດຕາ 26 (ປັບປຸງ) ການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ແລ້ວສະເໜີປະທານປະເທດ ອອກລັດຖະດຳລັດປະກາດເປັນທາງການຢ່າງຊ້າ ເກົ້າສິບວັນ ກ່ອນວັນເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງລະດັບຊາດ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ ແຕ່ຈຳນວນຄະນະກຳມະການດັ່ງກ່າວ ບໍ່ໃຫ້ເກີນ ຊາວເອັດຄົນ.

**ມາດຕາ 27 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບຊາດ**

ຄະນະກຳມະການເລືອກຕັ້ງລະດັບຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ ຊີ້ນຳ ວຽກງານເລືອກຕັ້ງ ໃນຂອບເຂດທົ່ວປະເທດ;

2. ຄົ້ນຄວ້າ, ກຳນົດທິດທາງ, ແຜນການເຄື່ອນໄຫວ, ອອກມະຕິ, ຄຳສັ່ງ, ຄຳແນະນຳ ກ່ຽວກັບວຽກງານເລືອກຕັ້ງໃນທົ່ວປະເທດ;

3. ແນະນຳໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ;

4. ຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ, ກົດໝາຍ ແລະ ລະບຽບການ ເພື່ອຮັບປະກັນການຍົກລະດັບການນຳໃຊ້ສິດປະຊາທິປະໄຕຂອງພົນລະເມືອງ ແລະ ຮັບປະກັນຄວາມເປັນເອກະພາບ, ຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ກ່ຽວກັບວຽກງານເລືອກຕັ້ງໃຫ້ໄດ້ຮັບຜົນດີ;

5. ຊຸກຍູ້ ແລະ ປຸກລະດົມຂະບວນການດ້ານຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງ;

6. ກະກຽມ, ຈັດສັນງົບປະມານ, ແຈກຢາຍ ບັນດາເອກະສານ ແລະ ອຸປະກອນ ຮັບໃຊ້ການເລືອກຕັ້ງ;

7. ຄົ້ນຄວ້າ, ພິຈາລະນາ ຄໍາຮ້ອງຂໍສະໝັກຮັບເລືອກຕັ້ງ ເພື່ອອະນຸມັດ ແລະ ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງຢ່າງເປັນທາງການ;

8. ຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂຄໍາຄັດຄ້ານຂອງຜູ້ມີສິດເລືອກຕັ້ງ ແລະ ຜູ້ມີສິດສະໝັກຮັບເລືອກຕັ້ງ ກ່ຽວກັບວຽກງານຂອງຄະນະກໍາມະການເລືອກຕັ້ງຂັ້ນຂອງຕົນ ແລະ ລະດັບທ້ອງຖິ່ນ;

9. ນໍາພາ ຊີ້ນໍາ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະກໍາມະການເລືອກຕັ້ງລະດັບທ້ອງຖິ່ນ;

10. ສັງລວມ ແລະ ປະກາດຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃນທົ່ວປະເທດ;

11. ອອກບັດຢັ້ງຢືນຊົ່ວຄາວ ໃຫ້ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ;

12. ສະຫຼຸບ, ຕີລາຄາ ແລະ ຖອດຖອນບົດຮຽນ ກ່ຽວກັບການເລືອກຕັ້ງ, ຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນບັ້ນເລືອກຕັ້ງໃນທົ່ວປະເທດ;

13. ສະເໜີຄະນະປະຈໍາສະພາແຫ່ງຊາດ ເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ;

14. ລາຍງານຜົນສໍາເລັດຂອງການເລືອກຕັ້ງ ແລະ ຄຸນລັກສະນະຂອງຜູ້ໄດ້ຮັບເລືອກຕັ້ງຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດໃໝ່;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ກ່ຽວກັບວຽກງານເລືອກຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 28 (ປັບປຸງ) ການແຕ່ງຕັ້ງຄະນະກໍາມະການເລືອກຕັ້ງລະດັບທ້ອງຖິ່ນ**

ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ເປັນຜູ້ຄັດເລືອກແຕ່ງຕັ້ງຄະນະກໍາມະການເລືອກຕັ້ງລະດັບທ້ອງຖິ່ນ ແລ້ວປະກາດເປັນທາງການຢ່າງຊ້າ ຫົກສິບວັນ ກ່ອນວັນເລືອກຕັ້ງ.

ຄະນະກໍາມະການເລືອກຕັ້ງຂັ້ນແຂວງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກໍາມະການ ແຕ່ຈໍານວນຄະນະກໍາມະການດັ່ງກ່າວ ບໍ່ໃຫ້ເກີນ ສິບເກົ້າຄົນ;

ຄະນະກໍາມະການເລືອກຕັ້ງຂັ້ນເມືອງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກໍາມະການ ແຕ່ຈໍານວນຄະນະກໍາມະການດັ່ງກ່າວ ບໍ່ໃຫ້ເກີນ ຊາວຫ້າຄົນ.

**ມາດຕາ 29 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກໍາມະການເລືອກຕັ້ງລະດັບທ້ອງຖິ່ນ**

ຄະນະກໍາມະການເລືອກຕັ້ງລະດັບທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນໍາພາ ຊີ້ນໍາ ວຽກງານເລືອກຕັ້ງ ໃນຂອບເຂດທ້ອງຖິ່ນຕົນ;

2. ຜັນຂະຫຍາຍ ທິດທາງ, ແຜນການເຄື່ອນໄຫວ, ມະຕິ, ຄໍາສັ່ງ, ຄໍາແນະນໍາ ຂອງຄະນະກໍາມະການເລືອກຕັ້ງລະດັບຊາດ;

3. ສຶກສາອົບຮົມທາງດ້ານການເມືອງ-ແນວຄິດ, ກົດໝາຍ ແລະ ລະບຽບການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນການຍົກລະດັບການນໍາໃຊ້ສິດປະຊາທິປະໄຕຂອງພົນລະເມືອງລາວ ແລະ ຮັບປະກັນຄວາມເປັນເອກະພາບ ກ່ຽວກັບວຽກງານເລືອກຕັ້ງໃນຂັ້ນຂອງຕົນ;

4. ຊຸກຍູ້ ແລະ ປຸກລະດົມຂະບວນການດ້ານຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ;

5. ຄຸ້ມຄອງ, ນຳໃຊ້ງົບປະມານ, ແຈກຢາຍ ບັນດາເອກະສານ ແລະ ອຸປະກອນ ຮັບໃຊ້ການເລືອກຕັ້ງ ໃນເຂດຂອງຕົນ;

6. ນຳພາ ຊີ້ນຳ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະກຳມະການເລືອກຕັ້ງຂັ້ນລຸ່ມຖັດຕົນ;

7. ປະສານສົມທົບກັບກຳລັງປະກອບອາວຸດໃນຂັ້ນຂອງຕົນ ເພື່ອຮັບປະກັນຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນການເລືອກຕັ້ງ;

8. ນຳພາການຈັດຕັ້ງໂຄສະນາຫາສຽງ ແລະ ແນະນຳຊີວະປະຫວັດຂອງຜູ້ສະໝັກຮັບເລືອກຕັ້ງໃຫ້ຜູ້ມີສິດເລືອກຕັ້ງຮັບຮູ້;

9. ຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂຄຳຄັດຄ້ານຂອງຜູ້ມີສິດເລືອກຕັ້ງ ແລະ ຜູ້ມີສິດສະໝັກຮັບເລືອກຕັ້ງ ກ່ຽວກັບການປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ;

10. ສັງລວມ ແລະ ຢັ້ງຢືນຜົນການເລືອກຕັ້ງ ໃນຂອບເຂດທ້ອງຖິ່ນຂອງຕົນແລ້ວ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍສະບັບນີ້;

11. ຄົ້ນຄວ້າ, ພິຈາລະນາ ການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ ແລະ ຈັດຕັ້ງການຍ້ອງຍໍ ໃນເວລາທີ່ເໝາະສົມ;

12. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ລາຍງານ ກ່ຽວກັບການເລືອກຕັ້ງ ໃຫ້ຂັ້ນເທິງຖັດຕົນ;

13. ລາຍງານຜົນສຳເລັດຂອງການເລືອກຕັ້ງ ແລະ ຄຸນລັກສະນະຂອງຜູ້ໄດ້ຮັບເລືອກຕັ້ງ ຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ສຳລັບຄະນະກຳມະການເລືອກຕັ້ງຂັ້ນແຂວງ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ກ່ຽວກັບວຽກງານເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 30 (ປັບປຸງ) ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ

ຄະນະກຳມະການເລືອກຕັ້ງຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ໃນຂອບເຂດຂັ້ນຂອງຕົນ, ຍົກເວັ້ນໜ່ວຍປ່ອນບັດເລືອກຕັ້ງຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ບັນດາອົງການ, ກົມກອງ ຂອງກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ, ຫ້ອງວ່າການ ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຢູ່ໃນກຳລັງປະກອບອາວຸດ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ບ່ອນອົງການ, ກົມກອງ ແລະ ຫ້ອງວ່າການນັ້ນຕັ້ງຢູ່ ເພື່ອຮັບຊາບ.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ກຳມະການ ແຕ່ຈຳນວນທັງໝົດບໍ່ໃຫ້ເກີນ ສິບຫ້າຄົນ.

### ມາດຕາ 31 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້, ແນະນຳ, ສຶກສາອົບຮົມທາງດ້ານກົດໝາຍ, ລະບຽບການ ກ່ຽວກັບວຽກງານເລືອກຕັ້ງ ແລະ ຈັດຕັ້ງນຳພາຜູ້ມີສິດເລືອກຕັ້ງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄປໃຊ້ສິດປ່ອນບັດເລືອກຕັ້ງຢ່າງຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ;

2. ກະກຽມສະຖານທີ່, ຫີບບັດລົງຄະແນນສຽງສະມາຊິກສະພາແຫ່ງຊາດ ແລະ ຫີບບັດລົງຄະແນນສຽງສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ອຸປະກອນຮັບໃຊ້ການປ່ອນບັດເລືອກຕັ້ງ;

3. ຄຸ້ມຄອງ, ແນະນໍາ ແຈກຢາຍ ບັດລົງຄະແນນສຽງເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ບັດລົງຄະແນນສຽງເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ແກ່ຜູ້ມີສິດເລືອກຕັ້ງ;

4. ປະສານສົມທົບກັບກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໜ່ວຍປ່ອນບັດເລືອກຕັ້ງຂອງຕົນ;

5. ແກ້ໄຂຄໍາສະເໜີ ຫຼື ຄໍາຄັດຄ້ານຂອງຜູ້ມີສິດເລືອກຕັ້ງ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ແຍກຫີບບັດ, ນັບບັດ, ກວດກາບັດ ໃນແຕ່ລະຫີບ ແລະ ເຮັດບົດບັນທຶກຜົນການປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ບົດບັນທຶກຜົນການປ່ອນບັດເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ຢູ່ໜ່ວຍຂອງຕົນ ແລ້ວມອບບົດບັນທຶກ, ຕາປະທັບ ແລະ ເອກະສານອື່ນທີ່ສໍາຄັນ ໃຫ້ຄະນະກໍາມະການເລືອກຕັ້ງຂັ້ນເມືອງ;

7. ເກັບມ້ຽນບັດລົງຄະແນນສຽງທີ່ໄດ້ປ່ອນແລ້ວນັ້ນ ໄວ້ຈົນກວ່າອາຍຸການຂອງຄະນະກໍາມະການເລືອກຕັ້ງໄດ້ສິ້ນສຸດລົງ ແລ້ວຈຶ່ງທໍາລາຍຖິ້ມ;

8. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ລາຍງານ ກ່ຽວກັບວຽກງານເລືອກຕັ້ງ ຕໍ່ຄະນະກໍາມະການເລືອກຕັ້ງຂັ້ນເມືອງ;

9. ຄັດເລືອກຜູ້ທີ່ມີຜົນງານດີເດັ່ນ ແລ້ວສະເໜີໃຫ້ຄະນະກໍາມະການເລືອກຕັ້ງຂັ້ນເມືອງ ພິຈາລະນາ ແລະ ສະເໜີຂັ້ນເທິງຕົກລົງຍ້ອງຍໍ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ກ່ຽວກັບວຽກງານເລືອກຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 32 ອາຍຸການຂອງຄະນະກໍາມະການເລືອກຕັ້ງ**

ອາຍຸການ ຂອງຄະນະກໍາມະການເລືອກຕັ້ງລະດັບຊາດ ຈະສິ້ນສຸດລົງ ພາຍຫຼັງສໍາເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດນັ້ນ.

ອາຍຸການ ຂອງຄະນະກໍາມະການເລືອກຕັ້ງລະດັບທ້ອງຖິ່ນ ຈະສິ້ນສຸດລົງ ພາຍຫຼັງສໍາເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ຊຸດນັ້ນ.

## ໝວດທີ 6
## ການກໍານົດ ວັນເລືອກຕັ້ງ, ເວລາ ແລະ ລະບຽບການປ່ອນບັດເລືອກຕັ້ງ

**ມາດຕາ 33 (ປັບປຸງ) ການກໍານົດວັນເລືອກຕັ້ງ**

ຄະນະປະຈໍາສະພາແຫ່ງຊາດ ເປັນຜູ້ກໍານົດວັນເລືອກຕັ້ງ ແລ້ວສະເໜີປະທານປະເທດ ອອກລັດຖະດໍາລັດປະກາດ ຢ່າງເປັນທາງການ ກ່ອນວັນເລືອກຕັ້ງ ພາຍໃນເວລາ ເກົ້າສິບວັນ.

ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດໍາເນີນໃນວັນດຽວກັນຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍຖືເອົາ ວັນອາທິດ ເປັນວັນເລືອກຕັ້ງ.

ໃນກໍລະນີມີຄວາມຈໍາເປັນ ຄະນະປະຈໍາສະພາແຫ່ງຊາດ ອາດກໍານົດວັນເລືອກຕັ້ງ ສະເພາະກ່ອນ ຫຼື ຫຼັງວັນເລືອກຕັ້ງທີ່ໄດ້ກໍານົດໄວ້ນັ້ນກໍໄດ້.

**ມາດຕາ 34 (ປັບປຸງ) ການກຳນົດເວລາປ່ອນບັດເລືອກຕັ້ງ**

ເວລາປ່ອນບັດເລືອກຕັ້ງ ໃຫ້ເລີ່ມແຕ່ ເຈັດໂມງເຊົ້າ ຫາ ຫ້າໂມງແລງ.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຄົກລົງພິທີໄຂ ຫຼື ອັດ ໄວ ຫຼື ຊ້າ ກວ່າ ເວລາທີ່ໄດ້ກຳນົດໄວ້ນັ້ນກໍໄດ້ ໂດຍອີງໃສ່ສະພາບການຕົວຈິງຂອງແຕ່ລະບ່ອນ ແຕ່ບໍ່ໃຫ້ໄຂພິທີກ່ອນ ຫ້າໂມງເຊົ້າ ແລະ ອັດພິທີຊ້າກວ່າ ຫົກໂມງແລງ.

**ມາດຕາ 35 (ປັບປຸງ) ລະບຽບການປ່ອນບັດເລືອກຕັ້ງ**

ລະບຽບການປ່ອນບັດເລືອກຕັ້ງ ມີ ດັ່ງນີ້:

1. ສະຖານທີ່ປ່ອນບັດເລືອກຕັ້ງ ໃຫ້ຈັດໃສ່ບ່ອນທີ່ເຫັນວ່າເໝາະສົມ, ສະດວກດີ ແລະ ມີຄວາມປອດໄພ ເຊັ່ນ ໂຮງຮຽນ, ສະໂມສອນ, ວັດ ຫຼື ສະຖານທີ່ອື່ນ ໂດຍຈັດເປັນຫ້ອງສະເພາະ ເພື່ອໃຫ້ຜູ້ປ່ອນບັດ ຂີດບັດລົງຄະແນນສຽງເລືອກຕັ້ງ;

2. ການປ່ອນບັດເລືອກຕັ້ງສະມາຊິກສະພາ ໃນແຕ່ລະໜ່ວຍເລືອກຕັ້ງ ໃຫ້ມີສອງຫີບປ່ອນບັດ ຄື ຫີບປ່ອນບັດສະມາຊິກສະພາແຫ່ງຊາດ ແລະ ຫີບປ່ອນບັດສະມາຊິກສະພາປະຊາຊົນຂັ້ນແຂວງ;

3. ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງແນະນຳ, ເຜີຍແຜ່ ລະບຽບການຕ່າງໆ, ວິທີຂີດບັດ ແລະ ວິທີປ່ອນບັດລົງຄະແນນສຽງ ໃຫ້ຜູ້ມີສິດເລືອກຕັ້ງທຸກຄົນເຂົ້າໃຈ;

4. ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງໄຂຫີບບັດ ໃຫ້ເຫັນທາງໃນ ໂດຍຊ້ອງໜ້າຜູ້ມີສິດເລືອກຕັ້ງກ່ອນການປ່ອນບັດ;

5. ຜູ້ມີສິດເລືອກຕັ້ງ ຕ້ອງສະເໜີຕົວ ແລະ ແຈ້ງບັດຢັ້ງຢືນຕໍ່ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ເພື່ອຮັບເອົາບັດລົງຄະແນນສຽງ ທັງ ສອງຫີບບັດ;

6. ຜູ້ມີສິດເລືອກຕັ້ງ ທີ່ບໍ່ຮູ້ໜັງສື ຊຶ່ງບໍ່ສາມາດຂີດບັດດ້ວຍຕົນເອງໄດ້ນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ມີສິດແຕ່ງຕັ້ງຜູ້ຮັບຜິດຊອບຊ່ວຍຂີດບັດ, ແຕ່ຕ້ອງປະຕິບັດຕາມຄວາມມັກ, ການຊີ້ບອກຂອງຜູ້ນັ້ນ ແລະ ໃຫ້ຜູ້ກ່ຽວນຳເອົາບັດລົງຄະແນນສຽງໄປປ່ອນໃສ່ແຕ່ລະຫີບບັດດ້ວຍຕົນເອງ. ໃນກໍລະນີປ່ອນບັດດ້ວຍຕົນເອງບໍ່ໄດ້ ກໍມອບໃຫ້ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຜູ້ໃດໜຶ່ງ ຊ່ວຍນຳເອົາບັດໄປປ່ອນໃສ່ແຕ່ລະຫີບບັດ ໂດຍຊ້ອງໜ້າຜູ້ກ່ຽວ;

7. ຜູ້ມີສິດເລືອກຕັ້ງ ເຈັບປ່ວຍ, ເສຍອົງຄະ, ເຖົ້າແກ່ໄປປ່ອນບັດບໍ່ໄດ້ນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງຈັດຕັ້ງໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ໄປຮັບເອົາບັດລົງຄະແນນສຽງກັບທີ່;

8. ຜູ້ມີສິດເລືອກຕັ້ງຫາກຂີດບັດຜິດ ຕ້ອງສົ່ງບັດທີ່ຂີດຜິດນັ້ນຄືນ ແລ້ວຂໍເອົາບັດໃໝ່ນຳຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ;

9. ຜູ້ມີສິດເລືອກຕັ້ງ ຕ້ອງປ່ອນບັດລົງຄະແນນສຽງ ໃສ່ແຕ່ລະຫີບບັດ ເທື່ອລະຄົນ.

**ມາດຕາ 36 (ປັບປຸງ) ການແກ້ໄຂກໍລະນີເຫດການສຸກເສີນຢູ່ບ່ອນປ່ອນບັດເລືອກຕັ້ງ**

ໃນເວລາດຳເນີນການປ່ອນບັດເລືອກຕັ້ງນັ້ນ ຖ້າຫາກມີກໍລະນີເຫດການສຸກເສີນຢ່າງຮ້າຍແຮງເກີດຂຶ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງປະກາດໂຈະການປ່ອນບັດໃນທັນທີ, ແຕ່ຕ້ອງພິຈາລະນາແກ້ໄຂກໍລະນີດັ່ງກ່າວໃຫ້ສຳເລັດ ເພື່ອສາມາດສືບຕໍ່ການປ່ອນບັດນັ້ນໄດ້. ຖ້າຫາກບໍ່ສາມາດແກ້ໄຂໄດ້ນັ້ນ ກໍໃຫ້

ປະກາດງົດການປ່ອນບັດເລືອກຕັ້ງ ແລ້ວລາຍງານໃຫ້ຄະນະກໍາມະການເລືອກຕັ້ງຂັ້ນເມືອງ ພິຈາລະນາໃນທັນທີ ເພື່ອແກ້ໄຂ ຫຼື ກໍານົດວັນເວລາປ່ອນບັດເລືອກຕັ້ງໃໝ່.

## ໝວດທີ 7
## ການນັບຄະແນນສຽງ ແລະ ການປະກາດຜົນການເລືອກຕັ້ງ

### ມາດຕາ 37 (ປັບປຸງ) ການນັບຄະແນນສຽງ

ການນັບຄະແນນສຽງ ຕ້ອງດໍາເນີນຢ່າງເປີດເຜີຍ ໂດຍຊ້ອງໜ້າຕົວແທນມາຈາກ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຂອງໜ່ວຍປ່ອນບັດເລືອກຕັ້ງນັ້ນ.

ນັກຂ່າວ ແລະ ຜູ້ຕາງໜ້າຂອງຜູ້ສະໝັກຮັບເລືອກຕັ້ງ ຈະເຂົ້າຮ່ວມສັງເກດການ ແລະ ຕິດຕາມການນັບຄະແນນສຽງກໍໄດ້.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງແບ່ງເປັນ ສອງຈຸ ຄື ຈຸຮັບຜິດຊອບຫີບປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ຈຸຮັບຜິດຊອບຫີບປ່ອນບັດເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ.

ການນັບຄະແນນສຽງນັ້ນ ໃຫ້ຜູ້ໜຶ່ງອ່ານ, ຜູ້ໜຶ່ງກວດກາຄືນ, ຜູ້ໜຶ່ງຂຽນ ແລະ ຜູ້ອື່ນ ເປັນຜູ້ຕິດຕາມ ແລະ ບັນທຶກ.

### ມາດຕາ 38 (ປັບປຸງ) ບັດລົງຄະແນນສຽງທີ່ບໍ່ຖືກຕ້ອງ

ບັດລົງຄະແນນສຽງ ທີ່ບໍ່ຖືກຕ້ອງ ມີ ດັ່ງນີ້:

1. ບໍ່ມີຕາປະທັບຂອງໜ່ວຍປ່ອນບັດເລືອກຕັ້ງນັ້ນ;
2. ຂີດຊື່ຜູ້ສະໝັກຮັບເລືອກຕັ້ງເກີນ ຫຼື ຫຼຸດຈໍານວນທີ່ໄດ້ກໍານົດໄວ້;
3. ບໍ່ຂີດຊື່ຜູ້ສະໝັກຮັບເລືອກຕັ້ງ;
4. ປ່ອນບັດບໍ່ຖືກຕາມຫີບບັດທີ່ກ່ຽວຂ້ອງ;
5. ບໍ່ສາມາດເຊື່ອຖືໄດ້.

### ມາດຕາ 39 (ປັບປຸງ) ບົດບັນທຶກຜົນການປ່ອນບັດເລືອກຕັ້ງ

ບົດບັນທຶກຜົນການປ່ອນບັດເລືອກຕັ້ງ ໃຫ້ເຮັດເປັນ ສອງບົດ ຄື ບົດບັນທຶກຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ບົດບັນທຶກຜົນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ຊຶ່ງມີເນື້ອໃນ ດັ່ງນີ້:

1. ເວລາ ໄຂ ແລະ ອັດ ພິທີ ປ່ອນບັດເລືອກຕັ້ງ;
2. ລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;
3. ຈໍານວນຜູ້ມີສິດເລືອກຕັ້ງທັງໝົດ;
4. ຈໍານວນຜູ້ມາປ່ອນບັດເລືອກຕັ້ງຕົວຈິງ;
5. ຈໍານວນບັດລົງຄະແນນສຽງ ທີ່ໄດ້ຮັບຕົວຈິງຈາກຄະນະກໍາມະການເລືອກຕັ້ງ;
6. ຈໍານວນບັດລົງຄະແນນສຽງ ທີ່ຂີດຜິດໃນແຕ່ລະຫີບບັດ ຊຶ່ງໄດ້ນໍາມາປ່ຽນເອົາບັດໃໝ່;
7. ຈໍານວນບັດລົງຄະແນນສຽງ ທີ່ຖືກຕ້ອງໃນແຕ່ລະຫີບບັດ;
8. ຈໍານວນບັດລົງຄະແນນສຽງ ທີ່ບໍ່ຖືກຕ້ອງໃນແຕ່ລະຫີບບັດ;

9. ຈຳນວນບັດລົງຄະແນນສຽງ ທີ່ຍັງເຫຼືອບໍ່ໄດ້ຖືກນຳໃຊ້;

10. ຈຳນວນຄະແນນສຽງ ທີ່ຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນໄດ້ຮັບ;

11. ຈຳນວນຄຳຄັດຄ້ານຂອງຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ ທີ່ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງໄດ້ແກ້ໄຂແລ້ວ ແລະ ບໍ່ທັນໄດ້ແກ້ໄຂ ພ້ອມດ້ວຍເຫດຜົນ (ຖ້າຫາກມີ).

ບົດບັນທຶກດັ່ງກ່າວ ຕ້ອງມີລາຍເຊັນຂອງຫົວໜ້າຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ, ເລຂານຸການ ແລະ ພະຍານທີ່ເຂົ້າຮ່ວມໃນການກວດກາບັດ. ບົດບັນທຶກນັ້ນ ສະບັບໜຶ່ງ ສົ່ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ.

**ມາດຕາ 40 (ປັບປຸງ) ຜູ້ໄດ້ຮັບການເລືອກຕັ້ງ**

ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາ ແມ່ນ ຜູ້ໄດ້ຮັບຄະແນນສຽງຫຼາຍກວ່າ ຕາມລຳດັບ ຈົນຄົບຕາມຈຳນວນທີ່ຕ້ອງການເລືອກເອົາໃນແຕ່ລະເຂດເລືອກຕັ້ງ.

ໃນກໍລະນີຄະແນນສຽງ ຂອງຜູ້ຢູ່ໃນອັນດັບສຸດທ້າຍຂອງຈຳນວນທີ່ຕ້ອງການ ໃນເຂດເລືອກຕັ້ງໃດໜຶ່ງ ຫາກເທົ່າກັນນັ້ນ ໃຫ້ຕັດສິນເອົາຜູ້ມີອາຍຸການຫຼາຍກວ່າ, ແຕ່ໃນກໍລະນີອາຍຸການຫາກເທົ່າກັນ ກໍໃຫ້ເອົາຜູ້ມີອາຍຸກະສຽນສູງກວ່າ ເປັນຜູ້ໄດ້ຮັບການເລືອກຕັ້ງ.

ໃນກໍລະນີຄະແນນສຽງຂອງຜູ້ຢູ່ໃນອັນດັບສຸດທ້າຍຂອງຈຳນວນທີ່ຕ້ອງການ ໃນເຂດເລືອກຕັ້ງໃດໜຶ່ງ ຫາກເທົ່າກັນ ລະຫວ່າງ ເພດຍິງ ກັບ ເພດຊາຍ ໃຫ້ຕັດສິນເອົາເພດຍິງ.

ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ທີ່ດຳລົງຊີວິດຢູ່ທ້ອງຖິ່ນ ເຂດເລືອກຕັ້ງນັ້ນ ໃຫ້ເປັນທັງສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 41 (ປັບປຸງ) ສິດຂໍຄັດຄ້ານຜູ້ໄດ້ຮັບການເລືອກຕັ້ງ**

ຜູ້ມີສິດເລືອກຕັ້ງ ມີສິດຂໍຄັດຄ້ານຜູ້ໄດ້ຮັບການເລືອກຕັ້ງ ໃນເຂດເລືອກຕັ້ງຂອງຕົນກ່ອນ ວັນເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາ ຖ້າເຫັນວ່າຜູ້ໄດ້ຮັບການເລືອກຕັ້ງນັ້ນ ຫາກມີພຶດຕິກຳທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການເລືອກຕັ້ງ.

ຜູ້ຂໍຄັດຄ້ານນັ້ນ ຕ້ອງຍື່ນຄຳຮ້ອງຂໍຄັດຄ້ານ ພ້ອມດ້ວຍຂໍ້ມູນ ຫຼັກຖານ ທີ່ເຊື່ອຖືໄດ້ ຕໍ່ຄະນະກຳມະການເລືອກຕັ້ງຂັ້ນທີ່ກ່ຽວຂ້ອງ ແລະ ຕ້ອງຮັບຜິດຊອບຕໍ່ຄຳຂໍຄັດຄ້ານຂອງຕົນ ຕາມກົດໝາຍ ແລະ ລະບຽບການກ່ຽວກັບການເລືອກຕັ້ງ.

**ມາດຕາ 42 ສິດປົກປ້ອງຂອງຜູ້ໄດ້ຮັບການເລືອກຕັ້ງ**

ຜູ້ໄດ້ຮັບການເລືອກຕັ້ງ ມີສິດປົກປ້ອງຕົນເອງ ດ້ວຍການອະທິບາຍ, ຊີ້ແຈງ, ໃຫ້ເຫດຜົນ ກ່ຽວກັບບັນຫາທີ່ຜູ້ຂໍຄັດຄ້ານຕົນນັ້ນ ຕໍ່ຄະນະກຳມະການເລືອກຕັ້ງຂັ້ນທີ່ກ່ຽວຂ້ອງ.

**ມາດຕາ 43 (ໃໝ່) ການສິ້ນສຸດຖານະຜູ້ໄດ້ຮັບການເລືອກຕັ້ງ**

ການສິ້ນສຸດຖານະຜູ້ໄດ້ຮັບການເລືອກຕັ້ງ ມີກໍລະນີ ດັ່ງນີ້:

1. ຄະນະກຳມະການເລືອກຕັ້ງ ຕັດສິດຜູ້ກ່ຽວ ເນື່ອງຈາກຖືກຄັດຄ້ານ ຊຶ່ງຜູ້ກ່ຽວບໍ່ສາມາດແກ້ໄຂໄດ້;
2. ຜູ້ມີບັນຫາດ້ານສຸຂະພາບ ທີ່ບໍ່ສາມາດປະຕິບັດໜ້າທີ່ໄດ້ ໂດຍມີການຢັ້ງຢືນຈາກຄະນະແພດ;
3. ການຂໍຖອນຕົວໂດຍມີເຫດຜົນ;
4. ການເສຍຊີວິດ.

ໃນກໍລະນີ ຫາກເກີດມີການສິ້ນສຸດຖານະ ຕາມກໍລະນີໃດໜຶ່ງກ່ອນການປະກາດຜົນການເລືອກຕັ້ງ ໃຫ້ເລື່ອນເອົາຜູ້ສະໝັກຮັບເລືອກຕັ້ງ ທີ່ໄດ້ຮັບຄະແນນສຽງຫຼາຍຖັດຈາກຜູ້ໄດ້ຮັບການເລືອກຕັ້ງ ໃນເຂດເລືອກຕັ້ງນັ້ນ.

**ມາດຕາ 44 (ປັບປຸງ) ການປະກາດຜົນການເລືອກຕັ້ງ**

ພາຍຫຼັງຄະນະກຳມະການເລືອກຕັ້ງ ໄດ້ສຳເລັດການນັບຄະແນນສຽງເປັນທີ່ຮຽບຮ້ອຍ ແລະ ຖືກຕ້ອງແລ້ວ ໃຫ້ປະຕິບັດ ດັ່ງນີ້:

1. ຄະນະກຳມະການເລືອກຕັ້ງຂັ້ນແຂວງ ສົ່ງຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໄປຍັງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອສັງລວມ ແລະ ປະກາດຜົນຢ່າງເປັນທາງການ ພາຍໃນເວລາ ສິບວັນ ລັດຖະການ;

2. ຄະນະກຳມະການເລືອກຕັ້ງຂັ້ນເມືອງ ສົ່ງຜົນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ໄປຍັງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອສັງລວມ ແລະ ປະກາດຜົນຢ່າງເປັນທາງການ ພາຍໃນເວລາ ເຈັດວັນລັດຖະການ.

## ໝວດທີ 8
## ການເລືອກຕັ້ງແທນ

**ມາດຕາ 45 (ປັບປຸງ) ການເລືອກຕັ້ງແທນ**

ການເລືອກຕັ້ງແທນ ຈະໄດ້ຈັດຂຶ້ນ ເມື່ອສະມາຊິກສະພາ ໃນເຂດເລືອກຕັ້ງໃດໜຶ່ງ ຫາກຫຼຸດລົງຕາມກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ມາດຕາ 31 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ.

ການເລືອກຕັ້ງແທນ ຈະດຳເນີນໄດ້ກໍຕໍ່ເມື່ອອາຍຸການຂອງສະພາຊຸດນັ້ນ ຍັງເຫຼືອຢ່າງໜ້ອຍ ສອງປີ ນັບແຕ່ວັນທີ່ສະມາຊິກສະພາເຂດເລືອກຕັ້ງນັ້ນຫຼຸດລົງ. ໃນກໍລະນີຈຳເປັນ ຫາກສະມາຊິກສະພາຊຸດນັ້ນຫຼຸດລົງ ຊຶ່ງກະທົບຕໍ່ການປະຕິບັດ ສິດ ແລະ ໜ້າທີ່ ຂອງສະພາ ມອບໃຫ້ຄະນະປະຈຳສະພາ ເປັນຜູ້ພິຈາລະນາ ຕາມຄວາມເໝາະສົມ.

**ມາດຕາ 46 (ປັບປຸງ) ວິທີການເລືອກຕັ້ງແທນ**

ການເລືອກຕັ້ງແທນສະມາຊິກສະພາ ມີ ສອງວິທີ ໂດຍແມ່ນຄະນະປະຈຳສະພາ ເປັນຜູ້ຕົກລົງ ດັ່ງນີ້:

1. ວິທີທົ່ວໄປ: ຄະນະປະຈຳສະພາທີ່ກ່ຽວຂ້ອງ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ກຳນົດວັນເວລາເລືອກຕັ້ງແທນ. ການດຳເນີນການເລືອກຕັ້ງແທນຕາມວິທີທົ່ວໄປ ໃຫ້ປະຕິບັດຕາມກົດໝາຍສະບັບນີ້;

2. ວິທີສະເພາະ: ຄະນະປະຈຳສະພາທີ່ກ່ຽວຂ້ອງ ເປັນຜູ້ເລືອກເອົາຜູ້ສະໝັກຮັບເລືອກຕັ້ງ ທີ່ໄດ້ຮັບຄະແນນສຽງຫຼາຍຖັດຈາກຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາທີ່ກ່ຽວຂ້ອງ ໃນເຂດເລືອກຕັ້ງນັ້ນ ເປັນຜູ້ໄດ້ຮັບການເລືອກຕັ້ງແທນ ແລ້ວລາຍງານຕໍ່ກອງປະຊຸມສະພາ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 47 (ປັບປຸງ) ຂໍ້ຫ້າມ ສຳລັບຜູ້ມີສິດເລືອກຕັ້ງ**

ຫ້າມຜູ້ມີສິດເລືອກຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບິດເບືອນ ແນວທາງ ນະໂຍບາຍ ແລະ ຄວາມເປັນຈິງ ກ່ຽວກັບການເລືອກຕັ້ງ;
2. ໂຄສະນາ ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງ;
3. ປັ່ນປ່ວນ, ສ້າງສະຖານະການ ກໍ່ຄວາມບໍ່ສະຫງົບ ໃນໜ່ວຍເລືອກຕັ້ງ;
4. ແຊກແຊງ ການຂີດບັດລົງຄະແນນສຽງ ຂອງຜູ້ອື່ນ ຫຼື ທຳລາຍບັດເລືອກຕັ້ງ;
5. ຂີດບັດລົງຄະແນນສຽງຂອງຕົນ ແບບຊະຊາຍ ຫຼື ບໍ່ຖືກຕ້ອງຕາມລະບຽບການ;
6. ເປີດເຜີຍ, ເຜີຍແຜ່ ເອກະສານ ກ່ຽວກັບວຽກງານເລືອກຕັ້ງ ທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 (ປັບປຸງ) ຂໍ້ຫ້າມ ສຳລັບຜູ້ສະໝັກຮັບເລືອກຕັ້ງ**

ຫ້າມຜູ້ສະໝັກຮັບເລືອກຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໂຄສະນາ ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງດ້ວຍກັນ;
2. ໃຫ້ສິນບົນ, ຊື້ຈ້າງ, ຈອບອອຍ ຜູ້ມີສິດເລືອກຕັ້ງ ດ້ວຍຮູບການຕ່າງໆ;
3. ໂຄສະນາຫາສຽງ ໃນວັນເລືອກຕັ້ງ;
4. ເຂົ້າຫຍຸ້ງກ່ຽວການນັບບັດລົງຄະແນນສຽງ ຂອງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ;
5. ເປີດເຜີຍ, ເຜີຍແຜ່ ເອກະສານ ກ່ຽວກັບວຽກງານເລືອກຕັ້ງ ທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 49 (ປັບປຸງ) ຂໍ້ຫ້າມ ສຳລັບ ຄະນະກຳມະການເລືອກຕັ້ງ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ**

ຫ້າມ ຄະນະກຳມະການເລືອກຕັ້ງ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ມີພຶດຕິກຳ ດັ່ງນີ້:

1. ລຳອຽງ, ເຂົ້າຂ້າງອອກຂາ ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງ ເປັນຕົ້ນ ໃນເວລານັບບັດລົງຄະແນນສຽງ;
2. ໃສ່ຮ້າຍປ້າຍສີ, ທັບຖົມບົດບາດ ແລະ ຊື່ສຽງຂອງຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງ;
3. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການຄຸ້ມຄອງງົບປະມານ, ອຸປະກອນຮັບໃຊ້ການເລືອກຕັ້ງ;
4. ຮັບ ຫຼື ໃຫ້ສິນບົນ ຈາກຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ;
5. ຂີດບັດແທນຜູ້ມີສິດເລືອກຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງບັດ;
6. ລະເມີດກຳນົດເວລາ ປ່ອນບັດເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້;

7. ເປີດເຜີຍ, ເຜີຍແຜ່ ເອກະສານ ກ່ຽວກັບວຽກງານເລືອກຕັ້ງ ທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 50 (ປັບປຸງ) ຂໍ້ຫ້າມ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງຜູ້ອື່ນບໍ່ໃຫ້ເຂົ້າຮ່ວມການເລືອກຕັ້ງ;

2. ເຂົ້າໄປຫຍຸ້ງກ່ຽວໃນເວລາຜູ້ມີສິດເລືອກຕັ້ງດຳເນີນການຂີດບັດ;

3. ໂຄສະນາຫາສຽງ ໃຫ້ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງໃນວັນເລືອກຕັ້ງ ແລະ ເວລາດຳເນີນການປ່ອນບັດ;

4. ກໍ່ຄວາມວຸ້ນວາຍ ໃນການດຳເນີນການເລືອກຕັ້ງ ອັນເປັນການລະເມີດກົດໝາຍ ແລະ ລະບຽບການ;

5. ຍຸແຍ່, ຊວນເຊື່ອ ໃຫ້ຜູ້ສະໝັກຮັບເລືອກຕັ້ງ ໃນເຂດດຽວກັນນັ້ນ ມີຄວາມເຂົ້າໃຈຜິດ ຊຶ່ງກັນ ແລະ ກັນ;

6. ໃຫ້ ຫຼື ຮັບສິນບົນ ຫຼື ການຊື້ຈ້າງ, ຈອບອອຍ ຈາກຜູ້ສະໝັກຮັບເລືອກຕັ້ງດ້ວຍຮູບການຕ່າງໆ;

7. ເປີດເຜີຍ, ເຜີຍແຜ່ ເອກະສານ ກ່ຽວກັບວຽກງານເລືອກຕັ້ງ ທີ່ຍັງບໍ່ເປັນທາງການລົງພາຫະນະສື່ມວນຊົນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 51 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ປະກອບສ່ວນເຂົ້າໃນບັ້ນເລືອກຕັ້ງສະມາຊິກສະພາ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 52 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເລືອກຕັ້ງ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 53 (ປັບປຸງ) ງົບປະມານຮັບໃຊ້ວຽກງານເລືອກຕັ້ງ**

ງົບປະມານຮັບໃຊ້ວຽກງານເລືອກຕັ້ງສະມາຊິກສະພາ ແມ່ນ ງົບປະມານຂອງລັດ ຊຶ່ງມີ ງົບປະມານຮັບໃຊ້ຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ຈັດສັນງົບປະມານໃຫ້ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ຕາມເງື່ອນໄຂຕົວຈິງ ແລະ ຢ່າງເໝາະສົມ.

**ມາດຕາ 54 (ໃໝ່) ຕາປະທັບ**

ຄະນະກຳມະການເລືອກຕັ້ງແຕ່ລະລະດັບ ມີຕາປະທັບເປັນຂອງຕົນເອງ.

**ມາດຕາ 55 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ອອກຄຳແນະນຳ ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 56 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 9 ກັນຍາ 2024 ພາຍຫຼັງ ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 66/ສພຊ ລົງວັນທີ 14 ທັນວາ 2015 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 83/ສພຊ, ລົງວັນທີ 30 ມິຖຸນາ 2020.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ... ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**